ແລະ ແກ້ໄຂພະຍາດ ໂຄວິດ-19

ດ່ວນທີ່ສຸດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າແຂວງອຸດົມໄຊ
ຄະນະສະເພາະກິດ ປ້ອງກັນ, ຄວບຄຸມ
ແລະ ແກ້ໄຂພະຍາດ ໂຄວິດ-19

ເລກທີ 480 /ຈຂ.ອຊ
ອຸດົມໄຊ, ວັນທີ 25 ພຶດສະພາ 2021

# ແຈ້ງການ

**ເຖິງ: ບັນດາທ່ານຫົວໜ້າພະແນກການ, ອົງການລັດທຽບເທົ່າ, ສອງກອງບັນຊາການ ປກຊ-ປກສ, ເຈົ້າເມືອງ 7 ເມືອງ, ຫົວໜ່ວຍທຸລະກິດ, ບໍລິສັດ, ຫ້າງຮ້ານ, ພໍ່ຄ້າຊາວຂາຍ ແລະ ພໍ່ແມ່ປະຊາຊົນ ບັນດາເຜົ່າ ພາຍໃນແຂວງອຸດົມໄຊ ທີ່ນັບຖື.**

**ເລື່ອງ: ສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດ ຂອງເຊື້ອພະຍາດ ໂຄວິດ-19 ຮອດວັນທີ 7 ມິຖຸນາ 2021.**

- ອີງຕາມ ຄໍາສັ່ງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021.
- ອີງຕາມ ຄໍາສັ່ງແນະນໍາຂອງທ່ານເຈົ້າແຂວງອຸດົມໄຊ ສະບັບເລກທີ 334/ຈຂ.ອຊ, ລົງວັນທີ 22 ເມສາ 2021 ແລະ ຄໍາສັ່ງເພີ່ມເຕີມຂອງທ່ານເຈົ້າແຂວງ ສະບັບເລກທີ 343/ຈຂ.ອຊ, ລົງວັນ ທີ 25 ເມສາ 2021.
- ອີງຕາມ ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 528/ຫສນຍ, ລົງວັນທີ 20 ພຶດສະພາ 2021.
- ອີງຕາມ ຜົນຂອງກອງປະຊຸມທ່ານເຈົ້າແຂວງ ຮ່ວມກັບ ຄະນະສະເພາະກິດ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດ COVID-19 ຂັ້ນແຂວງ ຄັ້ງວັນທີ 24 ພຶດສະພາ 2021.

ໄລຍະຜ່ານມາປະຊາຊົນຊາວແຂວງອຸດົມໄຊ ໄດ້ໃຫ້ການຮ່ວມມືກັບ ຄະນະສະເພາະກິດປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດພະຍາດໂຄວິດ-19 ຂັ້ນແຂວງ, ຂັ້ນເມືອງ ຈັດຕັ້ງເຄື່ອນໄຫວປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດພະຍາດໂຄວິດ-19 ຢູ່ພາຍໃນແຂວງຂອງພວກເຮົາ ໄດ້ດີພໍສົມຄວນ, ແຕ່ເນື່ອງຈາກວ່າທີ່ຕັ້ງຂອງເທດສະບານແຂວງອຸດົມໄຊ ແມ່ນເປັນທາງຜ່ານຂອງບັນດາແຂວງພາກເໜືອ ມີຜູ້ຄົນຜ່ານສັນຈອນໄປ-ມາເປັນຈໍານວນຫຼາຍ, ອີກດ້ານຍັງມີປະຊາຊົນຈໍານວນໜຶ່ງຍັງຖືເບົາໃນການປະຕິບັດມາດຕະການຕ່າງໆທີ່ຄະນະສະເພາະກິດ ວາງອອກ. ຈຶ່ງເຮັດໃຫ້ການແຜ່ລະບາດພະຍາດໂຄວິດ-19 ຢູ່ເທດສະບານແຂວງອຸດົມໄຊຂອງພວກເຮົາເພີ່ມຂຶ້ນ ແລະ ໜ້າເປັນຫ່ວງຫຼາຍຕໍ່ກັບການແຜ່ລະບາດດັ່ງກ່າວ. ສະນັ້ນ, ຄະນະສະເພາະກິດປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດພະຍາດໂຄວິດ-19 ຂັ້ນແຂວງ ຈຶ່ງອອກແຈ້ງການ ດັ່ງນີ້:

1. ສືບຕໍ່ປະຕິບັດມາດຕະການຕ່າງໆທີ່ລະບຸໃນ ຄໍາສັ່ງ ເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ຄໍາສັ່ງ ສະບັບເລກທີ 334/ຈຂ.ອຊ, ລົງວັນທີ 22 ເມສາ 2021 ແລະ ຄໍາສັ່ງເພີ່ມເຕີມຂອງທ່ານເຈົ້າແຂວງ ສະບັບເລກທີ 343/ຈຂ.ອຊ, ລົງວັນ ທີ 25 ເມສາ 2021 **ອອກໄປຕື່ມ 15 ວັນ ເລີ່ມແຕ່ເວລາ 00:00 ໂມງ ຂອງວັນທີ 25 ພຶດສະພາ 2021 ຫາ ເວລາ 24:00 ໂມງ ຂອງວັນທີ 7 ມິຖຸນາ 2021 ຢ່າງເຂັ້ມງວດ.**
2. **ປິດການສັນຈອນ ເຂົ້າ-ອອກ ໃນພື້ນທີ່ເທດສະບານເມືອງໄຊ, ເຊິ່ງເລີ່ມແຕ່ຈຸດໃຈກາງເທດສະບານເມືອງໄຊຮອດ: ຈຸດຫຼັກ 4 ທາງໄປເມືອງນາໝໍ້, 4 ແຍກບ້ານນາແສນຄໍາ**



Scanned with CamScanner
สแกนด้วย CamScanner

**ທາງໄປອ່າງນ້ຳທືບ, ຈຸດ 4 ແຍກບ້ານຫ້ວຍຊຸມ, ຈຸດ 3 ແຍກເຂົ້າໂຮງຮຽນອີຊາຊິບທາງໄປບ້ານບໍ່ ແລະ ຈຸດປ້ຳນ້ຳຫຼັກ 5 ທາງໄປເມືອງຫຼາ ເລີ່ມແຕ່ເວລາ 00:00 ໂມງ ຂອງວັນທີ 25 ພຶດສະພາ 2021 ຫາ ເວລາ 24:00 ໂມງ ຂອງວັນທີ 7 ມິຖຸນາ 2021 ຢ່າງເຂັ້ມງວດ.**

3. ຫ້າມບໍ່ໃຫ້ຄົນໃນພື້ນທີ່ອອກໄປທາງນອກເທດສະບານ ແລະ ຫ້າມຄົນນອກພື້ນທີ່ ລວມທັງຄົນຕ່າງເມືອງ ແລະ ຕ່າງແຂວງ ເຂົ້າມາໃນເທດສະບານເມືອງໄຊ ຍົກເວັ້ນກໍລະນີຈຳເປັນໄປທຳການຜະລິດກະສິກຳ ແລະ ທີ່ໄດ້ຮັບການພິຈາລະນາເຫັນດີຈາກຄະນະສະເພາະກິດຂັ້ນແຂວງ.

4. **ສືບຕໍ່ປະຕິບັດເຂັ້ມງວດມາດຕະການເພີ່ມເຕີມ.**

   1) ໃຫ້ປິດຮ້ານເສີມສວຍ, ຮ້ານຕັດຜົມ, ຮ້ານອົບນວດ, ສະຖານທີ່ທ່ອງທ່ຽວ, ສວນອາຫານ, ຮ້ານກິນດື່ມ, ສະຖານທີ່ບັນເທີງ, ຮ້ານຄາລາໂອເກະ, ຮ້ານເກມທຸກປະເພດ ໃນໄລຍະການເຝົ້າລະວັງນີ້ ໃຫ້ຜູ້ປະກອບການບັນດາຫົວໜ່ວຍທຸລະກິດທີ່ປິດຮ້ານດັ່ງກ່າວ ມີລະບຽບໃນການຄຸ້ມຄອງແຮງງານ ທີ່ຢູ່ໃຕ້ຄວາມຮັບຜິດຊອບຂອງຕົນ ໃຫ້ຢູ່ສະຖານທີ່ພັກເຊົາຂອງຕົນກຳນົດໄວ້ ແລະ ປະຕິບັດນະໂຍບາຍສະຫວັດດີການໃຫ້ແກ່ແຮງງານເຫຼົ່ານັ້ນຖືກຕ້ອງ, ຄົບຖ້ວນຕາມລະບຽບການຂອງລັດວາງອອກ.

   2) ໃຫ້ບຸກຄົນປະຈຳຢູ່ເຮືອນ, ຫ້າມບຸກຄົນເດີນທາງເຂົ້າ-ອອກບ້ານ (ບ້ານສີແດງ) ທີ່ມີການຕິດເຊື້ອ ຫຼື ເຂດທີ່ມີຄວາມສ່ຽງສູງ (ບ້ານສີເຫຼືອງ) ຕາມການກຳນົດຂອງຄະນະສະເພາະກິດ; ຍົກເວັ້ນຜູ້ທີ່ໄດ້ຮັບອະນຸຍາດຈາກອົງການປົກຄອງທີ່ກ່ຽວຂ້ອງດ້ວຍເງື່ອນໄຂ ແລະ ເຫດຜົນທີ່ຈຳເປັນເຊັ່ນ: ການເຈັບເປັນ, ການເສຍຊີວິດ ແລະ ວຽກອັນຮີບດ່ວນ ແຕ່ຕ້ອງໄດ້ຜ່ານການກວດກາເອກະສານທີ່ກ່ຽວຂ້ອງ ແລະ ເກັບຂໍ້ມູນຢ່າງລະອຽດຈາກຄະນະສະເພາະກິດຂັ້ນແຂວງ. ມອບໃຫ້ພະແນກສາທາລະນະສຸກແຂວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກຳນົດເຂດ/ບ້ານສີແດງ.

   3) ຫ້າມຈັດປະຊຸມ, ໂຮມຊຸມນຸມ ແລະ ກິດຈະການຕ່າງໆ ທີ່ມີຄົນເຂົ້າຮ່ວມຫຼາຍກວ່າ 10 ຄົນ, ຖ້າມີກໍລະນີທີ່ຈຳເປັນ ຕ້ອງໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ແລະ ຕ້ອງປະຕິບັດຕາມມາດຕະການຂອງຄະນະສະເພາະກິດວາງອອກຢ່າງເຂັ້ມງວດ ເປັນຕົ້ນ: ການວັດແທກອຸນຫະພູມ, ຮັກສາໄລຍະຫ່າງ 1 ແມັດຂຶ້ນໄປ, ໃສ່ຜ້າອັດປາກ-ດັງ ແລະ ລ້າງມືໃສ່ສະບູ ຫຼື ເຈວລ້າງມື.

   4) ໃຫ້ຄະນະສະເພາະກິດຂັ້ນແຂວງ ແລະ ເມືອງແນະນຳລະອຽດໃນການຈັດຕັ້ງປະຕິບັດບັນດາມາດຕະ ການຕ່າງໆ ໃຫ້ແຕ່ລະເປົ້າໝາຍ ກໍ່ຄືຢູ່ແຕ່ລະເຂດຄວາມຮັບຜິດຊອບຂອງຕົນຕາມຄວາມເໝາະສົມ ແລະ ປະຕິບັດເຂັ້ມງວດຕໍ່ຜູ້ລະເມີດຝ່າຝືນ.

   5) ມອບໃຫ້ ຄະນະສະເພາະກິດ ຂັ້ນແຂວງ ເຂັ້ມງວດໃນການຄວບຄຸມດ່ານເຂົ້າ-ອອກ ແລະ ຜ່ານແຂວງ, ເທດສະບານເມືອງໄຊ ແລະ ມອບໃຫ້ ຄະນະພັກ, ອົງການປົກຄອງເມືອງໄຊ ຊີ້ນຳ ອົງການປົກຄອງບ້ານພາຍໃນເທດສະບານເມືອງໄຊ ຄຸມເຂັ້ມຄົນສັນຈອນເຂົ້າ-ອອກບ້ານຂອງຕົນ.

   6) ໃຫ້ພະນັກງານ-ລັດຖະກອນທີ່ນອນໃນເທດສະບານເມືອງໄຊ ຜັດປ່ຽນກັນປະຈຳການສ່ວນທີ່ເຫຼືອແມ່ນໃຫ້ເຮັດວຽກຢູ່ເຮືອນ ແລະ ປະສານງານທາງເອເລັກໂຕຼນິກ ຍົກເວັ້ນທະຫານ-ຕຳຫຼວດ ແລະ ແພດໝໍ.

5. **ໃຫ້ 6 ເມືອງ ແລະ ນອກເທດສະບານເມືອງໄຊປະຕິບັດມາດຕະການຜ່ອນຜັນ:**

   1) ການຕັ້ງຈຸດກວດຕ່າງໆ ຢູ່ 6 ເມືອງນອກຈາກຈຸດເຊື່ອມຕໍ່ເທດສະບານເມືອງໄຊແມ່ນໃຫ້ຫຼຸດຈຳນວນຈຸດກວດລົງ ແລະ ໃຫ້ຮັກສາໄວ້ແຕ່ຈຸດກວດລະຫວ່າງ ແຂວງ-ແຂວງ ເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ; ສຳລັບເສັ້ນທາງຢູ່ໃນເຂດຊົນນະບົດໂດຍສະເພາະແມ່ນເສັ້ນທາງລະຫວ່າງເມືອງ-ບ້ານ , ບ້ານ-ບ້ານ ແມ່ນໃຫ້ອຳນວຍຄວາມສະດວກ ໃນການເດີນທາງໄປມາຫາກັນຢ່າງເປັນປົກກະຕິ.

   2) ໃຫ້ດຳເນີນການຂົນສົ່ງສິນຄ້າ ລະຫວ່າງ ເມືອງຕໍ່ເມືອງ ພາຍໃນແຂວງອຸດົມໄຊ ໂດຍບໍ່ຕ້ອງມີໃບອະນຸຍາດຈາກຄະນະສະເພາະກິດຂັ້ນແຂວງ ຫຼື ເມືອງ; ຜ່ອນຜັນການກວດກາການເຄື່ອນໄຫວໄປ-ມາຂອງປະຊາຊົນພາຍໃນແຕ່ລະເມືອງ ເປັນຕົ້ນແມ່ນການອອກໄປທຳການຜະລິດ.



Scanned with CamScanner

CS สแกนด้วย CamScanner

3) ໃຫ້ເປີດຮ້ານບໍລິໂພກປະຈຳວັນເຊັ່ນ: ຮ້ານອາຫານ, ຮ້ານກາເຟ ດ້ວຍວິທີການທີ່ເໝາະສົມເຊັ່ນ: ບໍລິການແຕ່ສະເພາະຜູ້ມາສັ່ງເອົາອາຫານກັບໄປກິນຢູ່ເຮືອນຕົນ ຫຼື ມີບໍລິການສົ່ງເຖິງສະຖານທີ່ເທົ່ານັ້ນ, ຫ້າມບໍ່ໃຫ້ລູກຄ້ານັ່ງກິນຢູ່ໃນຮ້ານ.

4) ອະນຸຍາດໃຫ້ ອອກກຳລັງກາຍ, ຫຼິ້ນກິລາກາງແຈ້ງເຊັ່ນ: ຍ່າງອອກກຳລັງກາຍຢູ່ຕາມສະຖານທີ່ຕ່າງໆ, ການຫຼິ້ນກິລາເຕະບານ ແລະ ກິລາອື່ນໆ ແຕ່ໃຫ້ເຈົ້າພາບສະຖານທີ່ດັ່ງກ່າວສ້າງແຜນລະອຽດໃນການປະຕິບັດມາດຕະການສະກັດກັ້ນພະຍາດໂຄວິດ-19 ຢ່າງເຄັ່ງຄັດ.

5) ອະນຸຍາດໃຫ້ຜູ້ຂັບລົດຂົນສົ່ງສິນຄ້າເຂົ້າ-ອອກລະຫວ່າງ ແຂວງຕໍ່ແຂວງ ສາມາດຂົນສົ່ງສິນຄ້າເຖິງປາຍທາງໄດ້, ແຕ່ຕ້ອງປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ມີໃບຢັ້ງຢືນການເດີນທາງຈາກພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ ຈຶ່ງສາມາດເຄື່ອນຍ້າຍໄດ້.

6) ສຳລັບບັນດາໂຮງຮຽນຕ່າງໆ ແມ່ນໃຫ້ສືບຕໍ່ໂຈະການຮຽນ-ການສອນ ຂອງສະຖາບັນການສຶກສາທຸກຂັ້ນ, ທຸກລະບົບ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວແຂວງອຸດົມໄຊ ເພື່ອສືບຕໍ່ຕິດຕາມສະພາບການຈົນກວ່າຈະມີການປ່ຽນແປງ.

7) ໃຫ້ຄະນະສະເພາະກິດຄົ້ນຄວ້າກຳນົດຈຸດກັກກັນ ແລະ ສືບຕໍ່ປະຕິບັດຢ່າງເຂັ້ມງວດໃນການກັກກັນຄົນນອກເຂົ້າມາພາຍໃນແຂວງ, ເມືອງ.

8) ມອບໃຫ້ກອງເລຂາສະຫຼຸບສັງລວມວຽກປ້ອງກັນ, ຄວບຄຸມ ແລະ ແກ້ໄຂພະຍາດໂຄວິດ-19 ລາຍງານໃຫ້ຫົວໜ້າຄະນະສະເພາະກິດ ແລະ ການນຳແຂວງ ໃນເວລາ 5:00 ໂມງແລງຂອງແຕ່ລະວັນ.

5. ໃຫ້ຄະນະສະເພາະກິດຂັ້ນແຂວງ ແລະ ບັນດາເມືອງ ສືບຕໍ່ລະດົມທຶນ ແລະ ຮັບເອົາການຊ່ວຍເຫຼືອຕ່າງໆໃນສັງຄົມ ເພື່ອມານຳໃຊ້ເຂົ້າໃນວຽກງານປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການແຜ່ລະບາດຂອງເຊື້ອພະຍາດ COVID-19.

6. ມອບໃຫ້ບັນດາຄະນະພັກ, ຄະນະສະເພາະກິດຂັ້ນແຂວງ, ຄະນະພະແນກການ, ອົງການລັດທຽບເທົ່າ ແລະ ອົງການປົກຄອງເມືອງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພີ່ມທະວີການນຳພາ-ຊີ້ນຳເຊື່ອມຊຶມເອກະສານຕ່າງໆ ແລະ ຄຳສັ່ງ ຂອງທ່ານເຈົ້າແຂວງໃຫ້ທົ່ວເຖິງ ເພື່ອຈັດຕັ້ງປະຕິບັດຕາມມາດຕະການທີ່ກຳນົດໄວ້ຂ້າງເທິງນີ້; ການປະຕິບັດຕົວຈິງຫາກມີການປ່ຽນແປງ ຈະແຈ້ງໃຫ້ຊາບເປັນແຕ່ລະໄລຍະ.

7. ແຈ້ງການສະບັບນີ້ປ່ຽນແທນແຈ້ງການຂອງ ຫ້ອງວ່າການແຂວງ ສະບັບເລກທີ 592/ຫວຂ.ອຊ, ລົງວັນທີ 21 ພຶດສະພາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ຕ. ຄະນະສະເພາະກິດ ປ້ອງກັນ, ຄວບຄຸມ
ແລະ ແກ້ໄຂພະຍາດ ໂຄວິດ-19,
ຮອງເຈົ້າແຂວງອຸດົມໄຊ

ແຂວງອຸດົມໄຊ
ເຈົ້າແຂວງ

ສົມຈິດ ປັນຍາສັກ

Scanned with CamScanner
สแกนด้วย CamScanner